ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2026

ສາລະບານ **ໜ້າ**

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ	1
ໃບລາຍງານຖານະການເງິນ	2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	4
ໃບລາຍງານກະແສເງິນສົດ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	7 - 21

pwc

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2026, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າຄືການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວຍົນພື້ນຖານການທົບທວນຄືນ ຂອງພວກຂ້າພະເຈົ້າ.

ຂອບເຂດ ການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າຈະບໍ່ສະແດງຄວາມເຫັນຢົມພື້ນຖານການກວດສອບ.

ສະຫຼຸບ

ຢົມພື້ນຖານ ການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີຫຍັງທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີດັ່ງກ່າວ ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງຢ່າງເປັນສາລະສຳຄັນ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ການເນັ້ນຢ້ຳເລື່ອງສຳຄັນ - ພື້ນຖານໃນການສ້າງເອກະສານລາຍງານການເງິນ

ພວກເຮົາຂໍເນັ້ນຢ້ຳໃຫ້ເຫັນເຖິງບົດອະທິບາຍຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ ເຊິ່ງອະທິບາຍເຖິງພື້ນຖານໃນການສ້າງເອກະສານລາຍງານການເງິນ. ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນຕາມນະໂຍບາຍບັນຊີຂອງບໍລິສັດ ເຊິ່ງອາດມີຄວາມແຕກຕ່າງຈາກມາດຕະຖານການລາຍງານບັນຊີສາກົນ (IFRS). ສຳລັບຮອບໄລຍະບັນຊີເລີ່ມຕົ້ນໃນ ຫຼື ຫຼັງຈາກວັນທີ 1 ມັງກອນ 2026 ເປັນຕົ້ນໄປ, ບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດຕາມມາດຕະຖານການລາຍງານບັນຊີສາກົນ IFRS ຢ່າງຄົບຖ້ວນ. ປັດຈຸບັນ, ບໍລິສັດກຳລັງດຳເນີນການຂໍອະນຸຍາດຈາກໜ່ວຍງານກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍເລື່ອນການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ IFRS ອອກໄປ. ຂໍ້ສະຫຼຸບຂອງພວກເຮົາບໍ່ໄດ້ຖືກປັບປຸງ ຫຼື ປ່ຽນແປງໃດໆ ອັນເນື່ອງຈາກເລື່ອງນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ພິງພັນ ດຳຣິງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
2 ຕຸລາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຖ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	6	583,210,248	278,907,723
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	7	6,068,867,727	6,535,192,685
ເຄື່ອງໃນສາງ, ສຸດທິ	5,8	7,938,591,327	5,395,214,541
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ	10	897,975,931	798,383,150
ຊັບສິນໝຸນວຽນອື່ນໆ		6,474,112,394	6,722,829,048
ລວມຊັບສິນໝຸນວຽນ		**21,962,757,627**	**19,730,527,147**
ຊັບສິນບໍ່ໝຸນວຽນ			
ການລົງທຶນໃນບໍລິສັດໃນເຄືອ	9	240,422,000,000	240,422,000,000
ຊັບສິນປັດຖິງທີ່ ມີຕົວຕົນ, ສຸດທິ	11	16,895,041,292	17,647,115,991
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ	5,12	36,819,964,960	31,469,424,607
ລວມຊັບສິນບໍ່ໝຸນວຽນ		**294,137,006,252**	**289,538,540,598**
ລວມຊັບສິນ		**316,099,763,879**	**309,269,067,745**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	5,13	252,988,217,346	245,873,204,545
ໜີ້ສິນໝຸນວຽນອື່ນໆ	14	248,166,409	250,976,744
ເງິນກູ້ຢືມຈາກຜູ້ຖືຮຸ້ນ	5,15	1,303,875,000	275,380,000
ເງິນກູ້ຢືມໄລຍະສັ້ນ	16	330,000,000	2,000,000,000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	17	907,565,625	910,475,125
ລວມໜີ້ສິນໝຸນວຽນ		**255,777,824,380**	**249,310,036,414**
ໜີ້ສິນບໍ່ໝຸນວຽນ			
ໜີ້ສິນບໍ່ໝຸນວຽນອື່ນໆ	18	18,223,424,449	18,223,424,449
ລວມໜີ້ສິນບໍ່ໝຸນວຽນ		**18,223,424,449**	**18,223,424,449**
ລວມໜີ້ສິນ		**274,001,248,829**	**267,533,460,863**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50,000,000,000	50,000,000,000
ສ່ວນເພີ່ມທຶນ		3,269,466,406	3,269,466,406
ຄ້ຳສະສົມຕາມລະບຽບການ		932,158,245	932,158,245
ກຳໄລ/(ຂາດທຶນ) ສະສົມລໍຖ້າແບ່ງປັນ		(12,103,109,601)	(12,466,017,769)
ລວມທຶນເຈົ້າຂອງ		**42,098,515,050**	**41,735,606,882**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**316,099,763,879**	**309,269,067,745**

ທ່ານ ພົງຖານ ພິຕະຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 2 ຕຸລາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 2 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 21 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2026

	ບິດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ລາຍຮັບຈາກການຂາຍ		20,294,214,408	17,761,206,234
ຕົ້ນທຶນໃນການຂາຍ	19	(18,077,643,317)	(16,789,210,819)
ກຳໄລລວມ		**2,216,571,091**	**971,995,415**
ລາຍຈ່າຍການຂາຍ ແລະ ບໍລິຫານ		(4,962,944,590)	(5,431,111,284)
ລາຍຮັບອື່ນໆ		2,828,113,211	1,069,091,888
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ		436,153,018	(826,555,229)
ກຳໄລ/(ຂາດທຶນ) ຈາກການດຳເນີນງານ		**517,892,730**	**(4,216,579,210)**
ລາຍຈ່າຍທາງການເງິນ		(154,984,562)	(128,132,714)
ກຳໄລ/(ຂາດທຶນ) ກ່ອນຫັກອາກອນກຳໄລ		**362,908,168**	**(4,344,711,924)**
ອາກອນກຳໄລ	20	(-)	(-)
ກຳໄລ/(ຂາດທຶນ) ສຸດທິສຳລັບງວດ		**362,908,168**	**(4,344,711,924)**
ກຳໄລ/(ຂາດທຶນ) ຕໍ່ຮຸ້ນ			
ກຳໄລ/(ຂາດທຶນ) ພື້ນຖານຕໍ່ຮຸ້ນ	21	3.63	(43.45)

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 2 ຕຸລາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 2 ຕຸລາ 2026

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 21 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2026

	ທຶນຈົດທະບຽນ ກີບ	ສ່ວນເພີ່ມທຶນ ກີບ	ກຳໄລ/(ຂາດທຶນສະສົມ) ຖັງສະສົມຕາມ ລະບຽບການ ກີບ	ກຳໄລ/(ຂາດທຶນສະສົມ) ລໍຖ້າແບ່ງປັນ ກີບ	ລວມ ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2026 - ກວດສອບ	50,000,000,000	3,269,466,406	932,158,245	(12,466,017,769)	41,735,606,882
ກຳໄລໃນງວດ	(-)	(-)	(-)	362,908,168	362,908,168
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2026 - ທົບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(12,103,109,601)**	**42,098,515,050**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2025 - ກວດສອບ	50,000,000,000	3,269,466,406	932,158,245	(8,964,096,124)	45,237,528,527
ຂາດທຶນໃນງວດ	(-)	(-)	(-)	(4,344,711,924)	(4,344,711,924)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2025 - ທົບທວນຄືນ	**50,000,000,000**	**3,269,466,406**	**932,158,245**	**(13,308,808,048)**	**40,892,816,603**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 2 ຕຸລາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 2 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 21 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ປົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລ/(ຂາດທຶນ)ກ່ອນຫັກອາກອນກຳໄລ		**362,908,168**	**(4,344,711,924)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	11	922,590,308	932,926,391
ຄ່າຕັດຮອນ	12	481,044,711	481,044,711
ກຳໄລຈາກການສະສາງຊັບສິນບັດຄົງທີ່ມີຕົວຕົນ	11	(37,222,829)	(60,000,000)
ການສູນເສຍມູນຄ່າເຍື່ອນຊຳລະຕົ້ນທຶນການປຸກເບ້ຍ - ປາມເພື່ອຂາຍ	10	72,019,456	32,919,448
ການສູນເສຍມູນຄ່າເຍື່ອນຊຳລະຕົ້ນທຶນການປຸກ	12	(-)	262,258,453
(ກຳໄລ)/ຂາດທຶນຈາກອັດຕາແລກປ່ຽນ		(100,240,703)	820,773,084
ລາຍຈ່າຍອັດຕາດອກເບ້ຍ		154,984,562	128,132,714
ເກັບຄືນຄ່າສູນເສຍມູນຄ່າໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	7	(94,318,000)	(202,102,451)
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		593,832,887	634,575,081
ເຄື່ອງໃນສາງ, ສຸດທິ		(2,543,376,786)	(3,568,925,064)
ເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ		(179,222,893)	(238,173,244)
ຊັບສິນໝຸນວຽນອື່ນໆ		248,716,653	(257,282,825)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		8,275,919,299	5,547,987,094
ໜີ້ສິນໝຸນວຽນອື່ນໆ		(11,485,935)	205,139,843
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**8,146,148,898**	**374,561,311**
ດອກເບ້ຍທີ່ຈ່າຍ		(154,984,562)	(128,132,714)
ເງິນສົດສຸດທິ ຈາກກິດຈະກຳການດຳເນີນງານ		**7,991,164,336**	**246,428,597**

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ທ່ານ ພົງຄານ ພິດຈາມິງ
ຮອງຜູ້ອຳນວຍການ
ວັນທີ: 2 ຕຸລາ 2026

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 2 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 21 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ບົດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິມບັດຖິງທີ່ມີຕົວຕົນ	11	(170,515,609)	(278,756,036)
ຈ່າຍຄ່າຕົ້ນທຶນການປຸກ	12	(990,636,940)	(1,257,925,907)
ຮັບຈາກການສະສາງຊັບສິມບັດຖິງທີ່ມີຕົວຕົນ	11	4,032,900	60,000,000
ຈ່າຍເງິນການລົງທຶນໃນບໍລິສັດໃນເຄືອ	9	(4,869,805,915)	(1,912,160,419)
ເງິນສົດສຸດທິ ໃຊ້ໃນກິດຈະກຳການລົງທຶນ		**(6,026,925,564)**	**(3,388,842,362)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມໄລຍະສັ້ນ	16	330,000,000	2,000,000,000
ຈ່າຍເງິນຄືນຈາກການກູ້ຢືມ ໄລຍະສັ້ນ	16	(2,000,000,000)	(2,000,000,000)
ເງິນສົດສຸດທິ ໃຊ້ໃນກິດຈະກຳການເງິນ		**(1,670,000,000)**	**(-)**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**294,238,772**	**(3,142,413,765)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ	6	278,907,723	3,539,121,912
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		10,063,753	4,973,563
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	**6**	**583,210,248**	**401,681,710**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ຍອດໜີ້ຕ້ອງສົ່ງຈາກການເຊົ່າຊື້ຄ້າງຈ່າຍສຳລັບ ຍານພາຫະນະ ແລະ ເຄື່ອງໜັບຍາມທີ່ຊື້ໃນປີຜ່ານມາ		1,822,565,657	1,687,516,530
ການໄດ້ມາຂອງຕົ້ນຢົ້ນ ທີ່ຍັງບໍ່ໄດ້ຊຳລະ	12	8,270,002,650	4,774,449,234
ໂອນໄປລົງທຶນໃນບໍລິສັດໃນເຄືອ:			
- ໂອນໄປຄ່າເຍື່ອນລໍຖ້າຕັດຕົ້ນທຶນການປຸກ	9	3,436,665,182	1,139,050,130

ທ່ານ ພິງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 2 ຕຸລາ 2026

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 2 ຕຸລາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 – 21 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1. ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນບໍລິສັດ ຈົດທະບຽນ, ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານໜອງຄັນຄູ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນ: ນ້ຳມັນປາມດິບ, ນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ເດືອນ ກັນຍາ ປີ 2023, ບໍລິສັດ ໄດ້ມີການລົງທຶນໃນ ບໍລິສັດ ລາວດີ ກຣີນ ຈຳກັດຜູ້ດຽວ ໃນຊັດສ່ວນ 100%, ເຊິ່ງມູນຄ່າການລົງທຶນແມ່ນ 240,422,000,000 ກີບ (100,000 ຮຸ້ນ, ລາຄາຕໍ່ຮຸ້ນແມ່ນ 2,404,220 ກີບ). ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ 30 ມິຖຸນາ 2026, ບໍລິສັດ ໄດ້ຈ່າຍເງິນລົງທຶນເພີ່ມມູນຄ່າ 8,306,471,097 ກີບ (2025: 24,745,926,658 ກີບ). ນະວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຖອກເງິນລົງທຶນໃນບໍລິສັດໃນເຄືອແລ້ວຈຳນວນ 33,052,397,755 ກີບ (ໃນນັ້ນຖອກເປັນຊັບສິນມູນຄ່າ 15,526,199,825 ກີບ ແລະ ຖອກເປັນເງິນສົດມູນຄ່າ 17,526,197,930 ກີບ). ສ່ວນທີ່ຍັງເຫຼືອມູນຄ່າ 207,369,602,245 ກີບ ແມ່ນຮັບຮູ້ເປັນໜີ້ສິນອື່ນໆຕໍ່ບໍລິສັດໃນເຄືອ. (ບົດອະທິບາຍ ທີ 13).

ກິດຈະກຳຫຼັກຂອງບໍລິສັດໃນເຄືອ ແມ່ນການປູກຕົ້ນໄມ້ກະຖິນນາລິງ ແລະ ຕົ້ນຢີປ້ຳ, ໃຫ້ມີຄຸນນະພາບ ແລະ ມີຄວາມຍືນຍົງເພື່ອເປັນຜະລິດຕະພັນພ້ອມສ້າງມູນຄ່າສູງສຸດໃນການສົ່ງອອກສູ່ຕະຫຼາດພາຍນອກ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກຜູ້ອຳນວຍການໃນວັນທີ 2 ຕຸລາ 2026.

2. ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນ ການປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍ ທີ 2 ຂອງເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025. ເອກະສານລາຍງານການເງິນຫຼັກເຊັ່ນ: (ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ) ແມ່ນຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ.

ເອກະສານລາຍງານການເງິນການປີ ປະກອບມີ ໃບລາຍງານຖານະການເງິນ ນະ ວັນທີ 30 ມິຖຸນາ 2026 ພ້ອມກັບ ຂໍ້ມູນປຽບທຽບ ນະ ວັນທີ 31 ທັນວາ 2025, ໃບລາຍງານຜົນໄດ້ຮັບ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມກັບ ຂໍ້ມູນປຽບທຽບ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມກັບ ຂໍ້ມູນປຽບທຽບ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2025, ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ 30 ມິຖຸນາ 2026 ພ້ອມກັບຂໍ້ມູນປຽບທຽບ ສຳລັບໄລຍະ 6 ເດືອນຕົ້ນປີ ສິ້ນສຸດ 30 ມິຖຸນາ 2025 ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ປະກອບເອກະສານລາຍງານການເງິນການປີ, ເຊິ່ງໄດ້ນຳສະເໜີບົນພື້ນຖານທີ່ສອດຄ່ອງກັບການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2025.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2025.

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ອີງຕາມກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ ອອກໃນວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານທາງການເງິນສາກົນ (IFRS). ຢ່າງໃດກໍ່ຕາມ, ກະຊວງການເງິນ ໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ອອກແຈ້ງການ, ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບກະກຽມຈັດທຳແຜນປະຕິບັດການນຳໃຊ້ ມາດຕະຖານການລາຍງານການເງິນສາກົນ (IFRS) ຈົນເຖິງວັນທີ 31 ທັນວາ 2025. ຫຼັງຈາກວັນທີ 1 ມັງກອນ 2026 ເປັນຕົ້ນໄປ, ບັນດາບໍລິສັດຈົດທະບຽນທັງໝົດ ຕ້ອງນຳໃຊ້ IFRS ຢ່າງເຕັມຮູບແບບ.

ປະຈຸບັນ, ຜູ້ບໍລິຫານກຳລັງຢູ່ໃນຂັ້ນຕອນການຂໍອະນຸຍາດຈາກໜ່ວຍງານຄຸ້ມຄອງທີ່ກ່ຽວຂ້ອງ ເພື່ອຂໍເລື່ອນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ IFRS ອອກໄປ. ດັ່ງນັ້ນ, ຂໍ້ມູນທາງການເງິນທີ່ກ່ຽວຂ້ອງຈຶ່ງຍັງຄົງຖືກຈັດທຳຂຶ້ນຕາມນະໂຍບາຍການບັນຊີທີ່ມີຢູ່ຂອງບໍລິສັດ.

ສະຖານະທາງດ້ານການເງິນ

ນະວັນທີ 30 ມິຖຸນາ 2026, ໜີ້ສິນໝຸນວຽນ ຂອງບໍລິສັດແມ່ນເກີນຊັບສິນໝຸນວຽນມູນຄ່າ 26,445,464,508 ກີບ (ບໍ່ລວມເອົາມູນຄ່າຄ້າງຊຳລະໃຫ້ແກ່ບໍລິສັດໃນເຄືອ ທີ່ນຳສະເໜີໃວ້ພາຍໃຕ້ໝວດໜີ້ຕ້ອງສົ່ງອື່ນໆ). ເຖິງວ່າມີການຂາດດຸນທຶນໝຸນວຽນດັ່ງກ່າວ, ບໍລິສັດ ແມ່ນຍັງຄົງມີພົນກຳໄລຈາກການດຳເນີນງານສຸດທິ 362,908,168 ກີບ ສຳລັບໄລຍະ 06 ເດືອນຕົ້ນປີ ສິ້ນສຸດ 30 ມິຖຸນາ 2026.

ບໍລິສັດຍັງຄົງມີກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານເປັນບວກ ສຳລັບໄລຍະ 06 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026 ແລະ ຍັງຄົງຮັກສາສະຖານະຂອງຜູ້ຖືຮຸ້ນ ເປັນບວກ ນະ ວັນທີ 30 ມິຖຸນາ 2026 ແລະ ວັນທີ 31 ທັນວາ 2025.

ຝ່າຍບໍລິຫານໄດ້ຈັດຕັ້ງປະຕິບັດມາດຕະການຕ່າງໆ ເພື່ອບໍລິຫານສະພາບຄ່ອງ ແລະ ຮັກສາເງິນສົດ ແລະ ລາຍການທຽບເທົ່າເງິນສົດໃຫ້ພຽງພໍ, ເຊິ່ງລວມມີການໄດ້ຮັບການສະໜັບສະໜຸນທາງດ້ານການເງິນຈາກຜູ້ມີສ່ວນຮ່ວມໃນປະຈຸບັນ ແລະ ການເຈລະຈາຢ່າງຕໍ່ເນື່ອງກັບບຸກຄົນພາຍນອກ ເພື່ອສະໜັບສະໜຸນຄວາມຕ້ອງການດ້ານທຶນຮອນໄລຍະສັ້ນ ແລະ ແຜນການຄຸ້ມຄອງສະພາບຄ່ອງຂອງບໍລິສັດ. ອີງຕາມມາດຕະການເຫຼົ່ານີ້, ຝ່າຍບໍລິຫານເຊື່ອໝັ້ນວ່າ ບໍລິສັດຈະມີແຫຼ່ງທຶນທາງດ້ານການເງິນທີ່ພຽງພໍ ເພື່ອດຳເນີນທຸລະກິດຢ່າງຕໍ່ເນື່ອງ ແລະ ສາມາດຊຳລະໜີ້ສິນໄດ້ເມື່ອຮອດກຳນົດຊຳລະ ຢ່າງໜ້ອຍເປັນເວລາ 12 ເດືອນ ຈາກວັນທີໃນເອກະສານລາຍງານການເງິນສະບັບນີ້.

ສະນັ້ນ, ຂໍ້ມູນລາຍງານການເງິນນີ້ແມ່ນໄດ້ຈັດທຳຂຶ້ນຕາມເກນການດຳເນີນງານຢ່າງຕໍ່ເນື່ອງ.

3. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ທີ່ນຳໃຊ້ເຂົ້າໃນການຈັດທຳຂໍ້ມູນທາງການເງິນ ແມ່ນມີຄວາມສອດຄ່ອງກັບນະໂຍບາຍການບັນຊີ ທີ່ນຳໃຊ້ໃນເອກະສານລາຍງານການເງິນປະຈຳປີ ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2025, ຍົກເວັ້ນການປ່ຽນແປງນະໂຍບາຍການບັນຊີ ດັ່ງຕໍ່ໄປນີ້. ດັ່ງນັ້ນ, ມູນຄ່າປຽບທຽບ ບາງລາຍການ ຈຶ່ງໄດ້ຮັບການຈັດປະເພດໃໝ່ ເພື່ອໃຫ້ສອດຄ່ອງກັບການນຳສະເໜີໃນປັດຈຸບັນ ຕາມທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ບົດອະທິບາຍ ທີ 5.

3 ນະໂຍບາຍການບັນຊີ (ຕໍ່)

3.1 ເຄື່ອງໃນສາງ

ເຄື່ອງໃນສາງ ແມ່ນໄດ້ຮັບການວັດແທກມູນຄ່າດ້ວຍລາຄາທຶນ ຫຼື ມູນຄ່າສຸດທິທີ່ຈະໄດ້ຮັບ ແລ້ວແຕ່ມູນຄ່າໃດຈະຕ່ຳກວ່າ. ເຄື່ອງໃນສາງ ປະກອບມີ ນ້ຳມັນປາມດິບ ("CPO"), ສິນຄ້າສຳເລັດຮູບ, ສິນຄ້າລະຫວ່າງຜະລິດ ("WIP"), ປຸຍ, ນ້ຳມັນກາຊວນ, ແລະ ວັດສະດຸສະໜອງໂຮງງານອື່ນໆ ທີ່ຖືໄວ້ເພື່ອຂາຍຕາມການດຳເນີນທຸລະກິດປົກກະຕິ ຫຼື ເພື່ອຊົມໃຊ້ໃນຂະບວນການຜະລິດ. ສິນຄ້າສຳເລັດຮູບ ຕົ້ນຕໍແມ່ນປະກອບມີ ຜະລິດຕະພັນເສດເຫຼືອຈາກປາມ, ປຸຍ ແລະ ຜະລິດຕະພັນນ້ຳມັນກະຊວນຊີວະພາບ (Biodiesel B5). ວັດສະດຸສະໜອງໂຮງງານອື່ນໆ ຕົ້ນຕໍແມ່ນປະກອບມີ ນ້ຳມັນກະຊວນຊີວະພາບ ບີ100, ຂີ້ເຈຍ (Potassium nitrate), ສານເຄມີ ແລະ ເມັດພັນປາມ ທີ່ຊົມໃຊ້ໃນຂະບວນການຜະລິດ ຫຼື ຖືໄວ້ເພື່ອຂາຍຕາມການດຳເນີນທຸລະກິດປົກກະຕິ.

ເຄື່ອງໃນສາງບາງລາຍການ ອາດຈະຖືກຂາຍໃຫ້ລູກຄ້າໂດຍກົງ ຫຼື ຖືກຊົມໃຊ້ໃນກິດຈະກຳການຜະລິດຂອງບໍລິສັດ. ດັ່ງນັ້ນ, ລາຍການດັ່ງກ່າວ ຈຶ່ງຖືກຈັດປະເພດໄວ້ໃນເຄື່ອງໃນສາງ ເນື່ອງຈາກຖືກຖືໄວ້ເພື່ອຂາຍຕາມການດຳເນີນທຸລະກິດປົກກະຕິ ຫຼື ມີຈຸດປະສົງເພື່ອຊົມໃຊ້ໃນຂະບວນການຜະລິດ.

ລາຄາຕົ້ນທຶນ ແມ່ນກຳນົດໂດຍການນຳໃຊ້ວິທີຕົ້ນທຶນສະເລ່ຍ ເຊິ່ງລວມມີ ຕົ້ນທຶນການຊື້, ຕົ້ນທຶນການປ່ຽນສະພາບ ແລະ ຕົ້ນທຶນອື່ນໆ ທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງໄປຍັງສະຖານທີ່ ແລະ ສະພາບປັດຈຸບັນ. ຕົ້ນທຶນການຊື້ ປະກອບມີ ລາຄາຊື້, ພາສີຂາເຂົ້າ, ຄ່າຂົນສົ່ງ ແລະ ຕົ້ນທຶນອື່ນໆ ທີ່ກ່ຽວຂ້ອງໂດຍກົງ, ຫັກອອກດ້ວຍສ່ວນຫຼຸດການຄ້າ, ເງິນຄືນ ແລະ ລາຍການອື່ນໆ ທີ່ຄ້າຍຄືກັນ. ຕົ້ນທຶນການປ່ຽນສະພາບ ລວມມີ ຄ່າແຮງງານທາງກົງ ແລະ ການປັນສ່ວນຢ່າງມີລະບົບຂອງຄ່າໃຊ້ຈ່າຍບໍລິຫານການຜະລິດ ທີ່ເກີດຂຶ້ນໃນການປ່ຽນສະພາບວັດຖຸດິບໃຫ້ເປັນສິນຄ້າສຳເລັດຮູບ.

ມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບ ໝາຍເຖິງລາຄາຂາຍໂດຍປະມານໃນການດຳເນີນທຸລະກິດປົກກະຕິ ຫັກອອກຄ່າໃຊ້ຈ່າຍໂດຍປະມານໃນການເຮັດໃຫ້ສຳເລັດ ແລະ ຄ່າໃຊ້ຈ່າຍທີ່ຈຳເປັນເພື່ອການຂາຍ.

ເຄື່ອງໃນສາງ ຈະຖືກກວດກາເປັນໄລຍະ ແລະ ຈະມີການຮັບຮູ້ຄ່າເຜື່ອ ສຳລັບລາຍການສິນຄ້າທີ່ຫຼ້າສະໄໝ, ເຄື່ອນໄຫວຊ້າ, ເສຍຫາຍ ຫຼື ບົກພ່ອງ ເມື່ອຄາດວ່າຈະບໍ່ສາມາດກູ້ຄືນມູນຄ່າຕາມບັນຊີຂອງສິນຄ້າເຫຼົ່ານັ້ນໄດ້. ການຫຼຸດມູນຄ່າຂອງເຄື່ອງໃນສາງໃຫ້ເປັນມູນຄ່າສຸດທິທີ່ຈະໄດ້ຮັບ ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ໃນງວດທີ່ການຫຼຸດມູນຄ່ານັ້ນເກີດຂຶ້ນ. ການກັບລາຍການຂອງການຫຼຸດມູນຄ່າສິນຄ້າຄົງເຫຼືອໃນເວລາຕໍ່ມາ ຈະຖືກຮັບຮູ້ ເມື່ອສະຖານະການທີ່ເຄີຍເຮັດໃຫ້ສິນຄ້າໃນສາງຖືກຫຼຸດມູນຄ່ານັ້ນບໍ່ມີອີກຕໍ່ໄປ.

3.2 ເຍື່ອນລໍຖ້າຕັດຕົ້ນທຶນການປູກ

ເຍື່ອນລໍຖ້າຕັດຕົ້ນທຶນການປູກ ໝາຍເຖິງຕົ້ນທຶນທີ່ພົວພັນໂດຍກົງກັບການພັດທະນາ ແລະ ການສ້າງຕັ້ງໂຄງການປູກຝັງກ່ອນທີ່ຈະເລີ່ມການເກັບກ່ຽວ, ການຜະລິດ ຫຼື ການນຳໃຊ້ອື່ນໆຕາມຈຸດປະສົງ. ຕົ້ນທຶນດັ່ງກ່າວ ປະກອບມີ: ຄ່າໃຊ້ຈ່າຍໃນການກຽມພື້ນທີ່ດິນ ແລະ ການບຸກເບີກພື້ນທີ່, ຄ່າໃຊ້ຈ່າຍໃນການປູກ, ຄ່າແກ່ນພັນ, ຕົ້ນທຶນໃສ່ປຸຍ, ຄ່າບຳລຸງຮັກສາ ແລະ ຄ່າໃຊ້ຈ່າຍອື່ນໆທີ່ພົວພັນໂດຍກົງກັບການພັດທະນາເນື້ອທີ່ປູກຝັງ. ເຍື່ອນລໍຖ້າຕັດຕົ້ນທຶນການປູກລວມມີ ຕົ້ນທຶນທີ່ກ່ຽວຂ້ອງກັບການປູກຕົ້ນປາມ, ການປູກຕົ້ນຢີນ້ຳ ແລະ ໂຄງການພັດທະນາການປູກຝັງອື່ນໆ ທີ່ດຳເນີນໂດຍບໍລິສັດ.

ເຍື່ອນລໍຖ້າຕັດຕົ້ນທຶນການປູກ ຖືກສະສົມແຍກຕາມແຕ່ລະໂຄງການ ແລະ ຖືກວັດແທກມູນຄ່າດ້ວຍລາຄາຕົ້ນທຶນ ຫັກລົບດ້ວຍຄ່າຫຼຸຍຫ້ຽນສະສົມ ແລະ ການຫຼຸດລົງຂອງມູນຄ່າ (ຖ້າມີ).

3 ນະໂຍບາຍການບັນຊີ (ຕໍ່)

3.2 ເຍື່ອນລໍຖ້າຕັດຕົ້ນທຶນການປູກ (ຕໍ່)

ເຍື່ອນລໍຖ້າຕັດຕົ້ນທຶນການປູກ ຈະຖືກຮັບຮູ້ເປັນສິນຊັບບໍ່ໝຸນວຽນ ເມື່ອຄາດວ່າຈະໄດ້ຮັບຜົນປະໂຫຍດທາງເສດຖະກິດໃນອະນາຄົດ ຈາກໂຄງການປູກຝັງທີ່ກ່ຽວຂ້ອງນັ້ນ. ຕົ້ນທຶນຕ່າງໆ ຈະຖືກສະສົມຢ່າງຕໍ່ເນື່ອງ ຈົນກວ່າສິນຊັບການປູກຝັງທີ່ກ່ຽວຂ້ອງ ຈະບັນລຸເຖິງຂັ້ນຕອນ ທີ່ພ້ອມຈະນຳໃຊ້ໄດ້ຕາມຈຸດປະສົງ. ໂດຍທົ່ວໄປແລ້ວ, ການປູກຕົ້ນປາມ ແມ່ນຈະພ້ອມສຳລັບການເກັບກ່ຽວ ປະມານ 4 ປີ ນັບຈາກການລົງປູກ, ໃນຂະນະທີ່ ການປູກຕົ້ນຢີນ້ຳ ໂດຍທົ່ວໄປ ແມ່ນຈະພ້ອມສຳລັບການເກັບກ່ຽວ ປະມານ 5 ຫາ 6 ປີ ນັບຈາກການລົງປູກ.

ການປູກຕົ້ນປາມ

ຕົ້ນທຶນທີ່ເກີດຂຶ້ນໃນໄລຍະທີ່ຕົ້ນປາມຍັງບໍ່ທັນໃຫ້ຜົນຜະລິດ ແມ່ນຈະຖືກບັນທຶກເປັນທຶນ ໃນບັນຊີຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປູກ ຈົນກວ່າການປູກຕົ້ນປາມນັ້ນຈະພ້ອມສຳລັບການເກັບກ່ຽວ.

ເມື່ອເລີ່ມຕົ້ນການເກັບກ່ຽວໃນເຊິງການຄ້າ, ຕົ້ນທຶນການດູແລຮັກສາການປູກຕົ້ນປາມສະສົມ ຈະຖືກໂອນໄປຍັງບັນຊີການປູກຕົ້ນປາມທີ່ໃຫ້ຜົນຜະລິດແລ້ວ ແລະ ຈະຖືກຕັດຈ່າຍເປັນສ່ວນໜຶ່ງຂອງຕົ້ນທຶນອັດຖຸດິບ ຕາມອາຍຸການໃຫ້ຜົນຜະລິດທີ່ຄາດຄະເນໄວ້ຂອງການປູກຕົ້ນປາມ ຄື 26 ປີ.

ການປູກຕົ້ນຢີນ້ຳ

ຕົ້ນທຶນທີ່ເກີດຂຶ້ນໃນໄລຍະທີ່ຕົ້ນຢີນ້ຳຍັງບໍ່ທັນໃຫ້ຜົນຜະລິດ ແມ່ນຈະຖືກບັນທຶກເປັນທຶນ ໃນບັນຊີຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປູກ ຈົນກວ່າການປູກຕົ້ນຢີນ້ຳນັ້ນຈະພ້ອມສຳລັບການເກັບກ່ຽວ.

ເມື່ອເລີ່ມຕົ້ນການເກັບກ່ຽວໃນເຊິງການຄ້າ, ຕົ້ນທຶນການດູແລຮັກສາການປູກຕົ້ນຢີນ້ຳສະສົມ ຈະຖືກໂອນໄປຍັງບັນຊີຕົ້ນຢີນ້ຳທີ່ໃຫ້ຜົນຜະລິດແລ້ວ ແລະ ຈະຖືກຕັດຈ່າຍເປັນສ່ວນໜຶ່ງຂອງຕົ້ນທຶນອັດຖຸດິບ ຕາມອາຍຸການໃຫ້ຜົນຜະລິດທີ່ຄາດຄະເນໄວ້ຂອງການປູກຕົ້ນຢີນ້ຳ.

ລາຍຈ່າຍຕ່າງໆ ທີ່ບໍ່ຄົບເງື່ອນໄຂໃນການບັນທຶກເປັນຕົ້ນທຶນ ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ ເມື່ອເກີດຂຶ້ນ.

3.3 ເງິນກູ້ຢືມຈາກຜູ້ຖືຮຸ້ນ

ເງິນກູ້ຢືມຈາກຜູ້ຖືຮຸ້ນ ແມ່ນແຫຼ່ງທຶນທີ່ສະໜອງລ່ວງໜ້າໂດຍຜູ້ຖືຮຸ້ນ ເພື່ອສະໜັບສະໜຸນຄວາມຕ້ອງການດ້ານທຶນໝຸນວຽນຂອງບໍລິສັດ. ເງິນກູ້ຢືມດັ່ງກ່າວ ແມ່ນກຳນົດເປັນສະກຸນເງິນບາດ ໄທ ("THB"), ບໍ່ມີດອກເບ້ຍ, ບໍ່ມີຫຼັກຊັບຄ້ຳປະກັນ ແລະ ສາມາດທວງຖາມໃຫ້ຊຳລະຄືນໄດ້ທັນທີ.

ຍອດເຫຼືອຄ້າງຊຳລະ ແມ່ນໄດ້ຮັບການແປງຄ່າເປັນສະກຸນເງິນກີບລາວ ໂດຍອີງຕາມອັດຕາແລກປ່ຽນ ນະວັນທີລາຍງານ ຂອງແຕ່ລະງວດ. ຜົນກຳໄລ ຫຼື ຂາດທຶນຈາກອັດຕາແລກປ່ຽນ ທີ່ເກີດຂຶ້ນຈາກການແປງຄ່າຍອດເຫຼືອຂອງເງິນກູ້ຢືມ ຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ. ດັ່ງນັ້ນ, ເງິນກູ້ຢືມນີ້ ຈຶ່ງຖືກຈັດປະເພດເປັນໜີ້ສິນໝຸນວຽນ ນະ ວັນທີລາຍງານ.

4. ການຄາດຄະເນ

ການສ້າງເອກະສານລາຍງານການເງິນທົບທວນຄືນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຈຳເປັນຕ້ອງມີການຕັດສິນໃຈ, ການຄາດຄະເນ ແລະ ການສົມມຸດຕິຖານ ທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້. ໃນການສ້າງເອກະສານລາຍງານການເງິນທົບທວນຄືນ, ຜູ້ບໍລິຫານຕ້ອງມີການຕັດສິນໃຈທີ່ສຳຄັນ ໃນການນຳໃຊ້ນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງທີ່ມາອັນສຳຄັນ ໃນການຄາດຄະເນທີ່ບໍ່ແນ່ນອນເຊັ່ນດຽວກັນກັບຫຼັກການທີ່ໃຊ້ສຳລັບການສ້າງເອກະສານລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025.

5. ການຈັດປະເພດຂໍ້ມູນການປຽບທຽບຄືນໃໝ່

ໃນໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດ ໄດ້ທົບທວນຄືນການຈັດປະເພດ ແລະ ການນຳສະເໜີຊັບສິນ ແລະ ໜີ້ສິນບາງລາຍການ ໃນໃບລາຍງານຖານະການເງິນ. ການນຳສະເໜີທີ່ໄດ້ຮັບການຈັດປະເພດຄືນໃໝ່ນີ້ ແມ່ນເພື່ອສະໜອງຂໍ້ມູນທີ່ມີຄວາມຊັດເຈນ ແລະ ກ່ຽວຂ້ອງຫຼາຍຂຶ້ນ ຕໍ່ກັບການດຳເນີນງານຂອງບໍລິສັດ. ມູນຄ່າປຽບທຽບ ສຳລັບປີ ສິ້ນສຸດວັນທີ 31 ທັນວາ 2025 ຈຶ່ງໄດ້ຮັບການຈັດປະເພດໃໝ່ ເພື່ອໃຫ້ສອດຄ່ອງກັບການນຳສະເໜີໃນງວດປັດຈຸບັນ.

ຮູບແບບການນຳສະເໜີຄັ້ງກ່ອນ:

- ວັດສະດຸສະໜອງໂຮງງານແມ່ນໄດ້ຖືກນຳສະເໜີເປັນລາຍການແຍກຕ່າງຫາກ.
- ເຍື່ອນລໍຖ້າຕັດຕົ້ນທຶນ ຕົ້ນປາມ, ຕົ້ນຫຍີ່ນ້ຳ ແລະ ຕົ້ນກະຖິນນະລິງ ແມ່ນໄດ້ຖືກນຳສະເໜີເປັນລາຍການແຍກຕ່າງຫາກ.
- ເງິນຮັບລ່ວງໜ້າຈາກຜູ້ຖືຮຸ້ນແມ່ນໄດ້ນຳສະເໜີ ແລະ ຈັດປະເພດໄວ້ພາຍໃຕ້ ໝວດເຈົ້າໜີ້ການຄ້າ ແລະ ເຈົ້າໜີ້ອື່ນໆ.

ຮູບແບບການນຳສະເໜີທີ່ໄດ້ຮັບການຈັດປະເພດຄືນໃໝ່:

- ວັດສະດຸສະໜອງໂຮງງານ ແມ່ນໄດ້ຮັບການຈັດປະເພດໃໝ່ ແລະ ນຳສະເໜີລວມເຂົ້າກັບ ເຄື່ອງໃນສາງ.
- ເຍື່ອນລໍຖ້າຕັດຕົ້ນທຶນການປູກ ຕົ້ນປາມ, ຕົ້ນຢີ້ນ້ຳ ແລະ ຕົ້ນກະຖິນນະລິງ ແມ່ນໄດ້ຮັບການຈັດປະເພດໃໝ່ ແລະ ນຳສະເໜີລວມກັນເປັນ ເຍື່ອນລໍຖ້າຕັດຕົ້ນທຶນການປູກ. ທັ້ງນີ້, ລາຍລະອຽດການແຍກສ່ວນຂອງແຕ່ລະຕົ້ນທຶນ ຄ່າເຍື່ອນຊຳລະລໍຖ້າຕັດຕົ້ນທຶນ ແມ່ນໄດ້ເປີດເຜີຍໃນ ບົດອະທິບາຍ ທີ 12.
- ເງິນຮັບລ່ວງໜ້າຈາກຜູ້ຖືຮຸ້ນ ແມ່ນໄດ້ຮັບການຈັດປະເພດໃໝ່ ແລະ ນຳສະເໜີແຍກຕ່າງຫາກເປັນ ເງິນກູ້ຢືມຈາກຜູ້ຖືຮຸ້ນ.

ຜົນກະທົບຈາກການຈັດປະເພດຄືນໃໝ່ໃນໃບລາຍງານຖານະການເງິນ ສິ້ນສຸດ ວັນທີ 31 ທັນວາ 2025 ມີດັ່ງນີ້:

ໃບລາຍງານຖານະການເງິນສ	ລາຍການຕາມທີ່ນຳສະເໜີ ກ່ອນໜ້ານີ້ ກີບ	ການຈັດປະເພດຄືນໃໝ່ ກີບ	ຕາມທີ່ຈັດປະເພດຄືນ ກີບ
ວັດສະດຸສະໜອງໂຮງງານ, ສຸດທິ	4,647,424,158	(4,647,424,158)	(-)
ເຄື່ອງໃນສາງ, ສຸດທິ	747,790,383	4,647,424,158	5,395,214,541
ລວມຊັບສິນໝຸນວຽນ	**5,395,214,541**	**(-)**	**5,395,214,541**

ໃບລາຍງານຖານະການເງິນ	ລາຍການຕາມທີ່ນຳສະເໜີ ກ່ອນໜ້ານີ້ ກີບ	ການຈັດປະເພດຄືນໃໝ່ ກີບ	ຕາມທີ່ຈັດປະເພດຄືນ ກີບ
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	17,479,917,147	(17,479,917,147)	(-)
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນຢີ້ນ້ຳ, ສຸດທິ	13,989,507,460	(13,989,507,460)	(-)
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກ	(-)	31,469,424,607	31,469,424,607
ລວມຊັບສິນບໍ່ໝຸນວຽນ	**31,469,424,607**	**(-)**	**31,469,424,607**
ລວມຊັບສິນ	**36,864,639,148**	**(-)**	**36,864,639,148**

ໃບລາຍງານຖານະການເງິນ	ລາຍການຕາມທີ່ນຳສະເໜີ ກ່ອນໜ້ານີ້ ກີບ	ການຈັດປະເພດຄືນໃໝ່ ກີບ	ຕາມທີ່ຈັດປະເພດຄືນ ກີບ
ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	246,148,584,545	(275,380,000)	245,873,204,545
ເງິນກູ້ຢືມຈາກຜູ້ຖືຮຸ້ນ	(-)	275,380,000	275,380,000
ລວມໜີ້ສິນໝຸນວຽນ	**246,148,584,545**	**(-)**	**246,148,584,545**

ການຈັດປະເພດຄືນໃໝ່ດັ່ງກ່າວຂ້າງຕົ້ນ ມີຜົນກະທົບພຽງແຕ່ຕໍ່ການນຳສະເໜີໃນລາຍງານຖານະການເງິນເທົ່ານັ້ນ ແລະ ບໍ່ມີຜົນກະທົບຕໍ່ຍອດຊັບສິນລວມ, ໜີ້ສິນລວມ, ທຶນ, ກຳໄລ ຫຼື ຂາດທຶນ, ກຳໄລຕໍ່ຮຸ້ນ ຫຼື ກະແສເງິນສົດ ຂອງບໍລິສັດ.

6. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນສົດໃນມື	126,962,213	2,020,850
ເງິນຝາກໃນທະນາຄານທີ່ສາມາດຖອນເກັບໄດ້ໃນເວລາທີ່ຕ້ອງການ[i]	456,248,035	276,886,873
	583,210,248	**278,907,723**

(i) ເງິນຝາກໃນທະນະຄານ ລວມມີສາມສະກຸນເງິນ ແມ່ນມີ ສະກຸນ ໂດລາ, ກີບ ແລະ ບາດ ໃນບັນຊີເງິນຝາກກະແສລາຍວັນ ກັບທະນະຄານພາຍໃນປະເທດ ແລະ ທະນະຄານສາຂາຕ່າງປະເທດ.

7. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງຮັບການຄ້າ[i]	6,976,527,998	7,570,360,885
ໜີ້ຕ້ອງຮັບອື່ນໆ	372,789,929	339,600,000
ຫັກ: ຄ່າສຸນເສຍມູນຄ່າ[ii]	(1,280,450,200)	(1,374,768,200)
	6,068,867,727	**6,535,192,685**

(i) ໜີ້ຕ້ອງຮັບການຄ້າປະກອບມີໜີ້ຕ້ອງຮັບຈາກການຂາຍເຍັຍຕົ້ນປາມ, ນ້ຳມັນກະຊອນຊີວະພາບ, ກາກປາມ ແລະ ນ້ຳມັນປາມດິບ ພາຍໃນງວດ.

(ii) ລາຍການເຄື່ອນໄຫວສຳລັບໜີ້ສົງໄສຈະເສຍແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2026 - ກວດສອບ	1,374,768,200
ເພີ່ມຂຶ້ນ	(-)
ເກັບຄືນໜີ້ສົງໄສຈະເສຍ [i]	(94,318,000)
ຍອດຄົງເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2026 ທົບທວນຄືນ	**1,280,450,200**

(i) ໃນໄລຍະງວດ, ບໍລິສັດສາມາດເກັບໜີ້ຕ້ອງຮັບຄືນໄດ້ບາງສ່ວນ ເຊິ່ງກ່ອນໜ້ານີ້ໄດ້ມີການຮັບຮູ້ຄ່າເຜື່ອໜີ້ສົງໄສຈະສູນໄປ ແລ້ວ. ດັ່ງນັ້ນ, ຄ່າເຜື່ອໜີ້ສົງໄສຈະສູນທີ່ກ່ຽວຂ້ອງ ຈຳນວນ 94,318,000 ກີບ (ປີ 2025: 202,102,451 ກີບ) ຈຶ່ງໄດ້ ຖືກກັບລາຍການ ແລະ ຮັບຮູ້ເຂົ້າໃນລາຍຮັບອື່ນໆ ໃນໃບລາຍງານຜົນໄດ້ຮັບ.

8. ເຄື່ອງໃນສາງ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ນ້ຳມັນປາມດິບ (CPO)	5,270,446,813	4,196,253,337
ສິນຄ້າສຳເລັດຮູບ [(i)]	497,055,598	740,819,083
ຜະລິດຕະພັນພວມປຸງແຕ່ງ	571,796,375	6,971,300
ປຸຍ	233,559,909	208,883,414
ນ້ຳມັນກະຊວນ	34,764,680	5,947,336
ອັດສະດຸສະໜອງໂຮງງານ[(ii)]	1,330,967,952	236,340,071
ຫັກ: ຄ່າສູນເສຍມູນຄ່າ ສຳລັບສິນຄ້າລ້າສະໄໝ ແລະ ເຄື່ອນໄຫວຊ້ຳ	(-)	(-)
	7,938,591,327	**5,395,214,541**

(i) ສິນຄ້າສຳເລັດຮູບສ່ວນໃຫຍ່ປະກອບມີ: ຜະລິດຕະພັນເສດເຫຼືອຂອງປາມ, ປຸຍ ແລະ ນ້ຳມັນກະຊວນຊີວະພາບ B5 ທີ່ມີໄວ້ສຳລັບຂາຍຕາມການດຳເນີນກິດຈະການ.

(ii) ອັດສະດຸສະໜອງໂຮງງານ ສ່ວນໃຫຍ່ປະກອບມີ ນ້ຳມັນກະຊວນຊີວະພາບ B100, ປຸຍຊີວະພາບ, ສານເຄມີ ແລະ ເມັດພັນປາມທີ່ໃຊ້ໃນຂະບວນການຜະລິດ ຫຼື ທີ່ມີໄວ້ສຳລັບຂາຍຕາມການດຳເນີນກິດຈະການ.

ສຳລັບງວດ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດ ບໍ່ໄດ້ມີການຮັບຮູ້ການສູນເສຍມູນຄ່າເຄື່ອງໃນສາງ ຫຼື ການຫຼຸດມູນຄ່າເຄື່ອງໃນສາງໃຫ້ເປັນມູນຄ່າສຸດທິທີ່ຈະໄດ້ຮັບ.

9. ເງິນລົງທຶນໃນບໍລິສັດໃນເຄືອ

ລາຍລະອຽດຂອງເງິນລົງທຶນໃນບໍລິສັດໃນເຄືອ ຂອງບໍລິສັດ ມີດັ່ງນີ້:

ຊື່ບໍລິສັດ	ປະເທດທີ່ຈົດທະບຽນສ້າງຕັ້ງ	ສັດສ່ວນການຖືຮຸ້ນ	ກິດຈະກຳຫຼັກ	ທົບທວນຄືນ 30 ມິຖຸນາ 2026 (ກີບ)	ກວດສອບແລ້ວ 31 ທັນວາ 2025 (ກີບ)
ບໍລິສັດ ລາວ ດີກຣີນ ຜູ້ດຽວ ຈຳກັດ	ລາວ	100%	ການພັດທະນາ ແລະ ການບໍລິຫານ ຈັດການສວນປຸກ	240,422,000,000	240,422,000,000
ເງິນລົງທຶນໃນ ບໍລິສັດໃນເຄືອ, ຕາມຕົ້ນທຶນ				**240,422,000,000**	**240,422,000,000**

ອີງຕາມໃບຢັ້ງຢືນຮຸ້ນ ສະບັບທີ 00001/LDG ລົງວັນທີ 31 ທັນວາ 2023, ບໍລິສັດໄດ້ຈົດທະບຽນຊື້ຮຸ້ນສາມັນ ຈຳນວນ 100,000 ຮຸ້ນ ໃນບໍລິສັດ ລາວ ດີກຣີນ ຈຳກັດຜູ້ດຽວ ໃນມູນຄ່າທີ່ກຳນົດໄວ້ 2,404,220 ກີບຕໍ່ຮຸ້ນ, ເຊິ່ງຄິດເປັນທຶນຈົດທະບຽນທັງໝົດ 240,422,000,000 ກີບ.

ໃນໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຊຳລະທຶນເພີ່ມຕື່ມ ເປັນມູນຄ່າ 8,306,471,097 ກີບ, ເຊິ່ງປະກອບມີ ການຊຳລະເປັນເງິນສົດ ຈຳນວນ 4,869,805,915 ກີບ ແລະ ການຊຳລະເປັນສິ່ງຂອງຊັບສິນ ຈຳນວນ 3,436,665,182 ກີບ. ການຊຳລະເປັນສິ່ງຂອງຊັບສິນນັ້ນ ປະກອບມີ ເຍື່ອນລໍຖ້າຕັດຕົ້ນທຶນການປຸກ ທີ່ກ່ຽວຂ້ອງກັບສວນປຸກຕົ້ນຢີນ້ຳ ເຊິ່ງໄດ້ໂອນໃຫ້ ບໍລິສັດໃນເຄືອ ເພື່ອເປັນການຊຳລະທຶນທີ່ຮຽກເກັບທຶນທີ່ໄດ້ຊຳລະແລ້ວ.

9. ເງິນລົງທຶນໃນບໍລິສັດໃນເຄືອ (ຕໍ່)

ນະວັນທີ 30 ມິຖຸນາ 2026, ທຶນຊຳລະສະສົມ ມີມູນຄ່າ 33,052,397,755 ກີບ, ທຽບໃສ່ 24,745,926,658 ກີບ ນະວັນທີ 31 ທັນວາ 2025. ສ່ວນທຶນຈົດທະບຽນທີ່ຄ້າງຊຳລະ ຈຳນວນ 207,369,602,245 ກີບ, ທຽບໃສ່ 215,676,073,342 ກີບ ນະວັນທີ 31 ທັນວາ 2025, ໄດ້ຖືກລວມຢູ່ໃນໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ ຕາມທີ່ໄດ້ເປີດໂຜຍໄວ້ໃນ ບົດອະທິບາຍທີ 13 ແລະ 22.1 (i).

ການຊັກຊ້າໃນການປະກອບທຶນ ແມ່ນຍ້ອນຂໍ້ຈຳກັດດ້ານລະບຽບການ ທີ່ກຳນົດໂດຍອົງການຄຸ້ມຄອງລັດທ້ອງຖິ່ນ ຢູ່ສະຖານທີ່ຕັ້ງໂຄງການ ເຊິ່ງເຮັດໃຫ້ບໍລິສັດໃນເຄືອ ບໍ່ສາມາດເລີ່ມຕົ້ນກິດຈະກຳການພັດທະນາໂຄງການໄດ້. ດັ່ງນັ້ນ, ທຶນສ່ວນທີ່ເຫຼືອ ຈຶ່ງຍັງບໍ່ທັນໄດ້ຮັບການຖອກທຶນເຂົ້າເທື່ອ.

10. ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນຢາງ-ເບ້ຍຢາງເພື່ອຂາຍ

ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນຢາງ ຕົ້ນທຶນແມ່ນປະກອບມີທັງ ລາຄາຊື້ເມັດແກ່ນພັນຢາງ ແລະ ລາຍຈ່າຍໂດຍກົງຂອງການໄດ້ມາເບ້ຍຕົ້ນຢາງ ເຊັ່ນ: ຄ່າແຮງງານໃນການປູກ ແລະ ຄ່າປຸຍ.

ໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ມີການສະສາງເຍື່ອນລໍຖ້າຕັດຕົ້ນທຶນການປູກເບ້ຍຢາງທີ່ຕາຍອອກມູນຄ່າ 72,019,456 ກີບ ແລະ ໄດ້ຮັບຮູ້ມູນຄ່າດັ່ງກ່າວເຂົ້າໃນໃບລາຍງານຜົນໄດ້ຮັບ.

ລາຍການເຄື່ອນໄຫວສຳລັບເຍື່ອນລໍຖ້າຕັດຕົ້ນທຶນການປູກເບ້ຍຢາງເພື່ອຂາຍ ແມ່ນສະແດງດັ່ງຕາຕະລາງຂ້າງລຸ່ມນີ້:

	ກີບ
ຍອດຍົກມາ ໃນວັນທີ 1 ມັງກອນ 2026 ກວດສອບ	**798,383,150**
ເພີ່ມຂຶ້ນ	179,222,893
ໂອນໄປເຍື່ອນລໍຖ້າຕັດຕົ້ນທຶນການປູກ	(7,610,656)
ສະສາງອອກ	(72,019,456)
ຍອດເຫຼືອທ້າຍງວດ ໃນວັນທີ 30 ມິຖຸນາ 2026 - ທົບທວນຄືນ	**897,975,931**

11. ຊັບສິນຖາວອນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2026 - ກວດສອບ	**17,647,115,991**
ເພີ່ມຂຶ້ນ	170,515,609
ຄ່າຫຼຸ້ຍຫ້ຽນ	(922,590,308)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2026 - ທົບທວນຄືນ	**16,895,041,292**
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2026	
ຕົ້ນທຶນ	39,514,798,086
ຫັກ: ຄ່າຫລຸ້ຍຫ້ຽນສະສົມ	(22,619,756,794)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2026 - ທົບທວນຄືນ	**16,895,041,292**

11. ຊັບສິນຄົງທີ່ ມີຕົວຕົນ, ສຸດທິ (ຕໍ່)

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຕັດຈຳໜ່າຍຍານພາຫະນະທີ່ໄດ້ຖືກຫັກຄ່າຫຼ້ຍຫ້ຽນໝົດແລ້ວ ເຊິ່ງມີມູນຄ່າສຸດທິເຫຼືອໃນຂະນະສະສາງເທົ່າກັບສູນ. ມູນຄ່າທີ່ໄດ້ຮັບໃນການສະສາງມີມູນຄ່າ 37,222,829 ກີບ (2025: 60,000,000 ກີບ), ເຊິ່ງໄດ້ຮັບຮູ້ເປັນກຳໄລຈາກການສະສາງຊັບສິນ ແລະ ຖືກສະແດງໃວ້ໃນລາຍຮັບອື່ນໆໃນໃບລາຍງານຜົນໄດ້ຮັບ.

ນະ ວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຮັບຊຳລະເງິນຈາກຜູ້ຊື້ຍານພາຫະນະ ມູນຄ່າ 4,032,900 ກີບ ໃນຂະນະທີ່ຍອດຄົງຄ້າງຈຳນວນ ມູນຄ່າ 33,189,929 ກີບ ແມ່ນຍັງຄົງຄ້າງຊຳລະ ແລະ ຖືກສະແດງໃວ້ໃນລາຍການໜີ້ຕ້ອງຮັບອື່ນໆ.

12. ເຍື່ອນລໍຖ້າຕັດຕົ້ນທຶນການປຸກ

ເຍື່ອນລໍຖ້າຕັດຕົ້ນທຶນການປຸກ ແມ່ນຕົ້ນທຶນທີ່ກ່ຽວຂ້ອງໂດຍກົງກັບການດູແລຮັກສາ ແລະ ການສ້າງຕັ້ງໂຄງການສວນປຸກ ກ່ອນການເລີ່ມຕົ້ນເກັບກ່ຽວໃນເຊີງການຄ້າ, ການຜະລິດ ຫຼື ການນຳໃຊ້ໃນທາງອື່ນໆ ຕາມຈຸດປະສົງ. ເຍື່ອນລໍຖ້າຕັດຕົ້ນທຶນການປຸກ ປະກອບມີ ການປຸກຕົ້ນປາມທີ່ໃຫ້ຜົນຜະລິດແລ້ວ ເຊິ່ງໄດ້ເລີ່ມຕົ້ນການເກັບກ່ຽວໃນເຊີງການຄ້າ ແລະ ໂຄງການພັດທະນາສວນປຸກ ທີ່ຍັງບໍ່ທັນບັນລຸເຖິງຂັ້ນຕອນການເກັບກ່ຽວໃນເຊີງການຄ້າ. ໂຄງການພັດທະນາສວນປຸກ ຕົ້ນຕໍແມ່ນປະກອບມີ ສວນປາມທີ່ຍັງບໍ່ທັນໃຫ້ຜົນຜະລິດ, ການປຸກຕົ້ນຢີນ້ຳ ແລະ ການປຸກຕົ້ນກະຖິນນະລິງ ທີ່ຢູ່ໃນລະຫວ່າງການພັດທະນາ.

ການເຄື່ອນໄຫວຂອງເຍື່ອນລໍຖ້າຕັດຕົ້ນທຶນການປຸກ ແມ່ນຖືກສະຫຼຸບໄວ້ຂ້າງລຸ່ມນີ້:

12.1 ການປຸກຕົ້ນປາມ

	ການປຸກຕົ້ນປາມທີ່ໃຫ້ຜົນຜະລິດແລ້ວ, ສຸດທິ ກີບ	ການປຸກຕົ້ນປາມ ທີ່ຍັງບໍ່ທັນໃຫ້ຜົນຜະລິດ ກີບ	ລວມ ກີບ
ໄລຍະ 06 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2026			
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2026	16,576,396,817	903,520,330	17,479,917,147
ເພີ່ມຂຶ້ນ	(-)	173,125,049	173,125,049
ໂອນມາຈາກເບ້ຍປາມເພື່ອຂາຍ	(-)	7,610,656	7,610,656
ຄ່າຕັດຖອນ	(481,044,711)	(-)	(481,044,711)
ຍອດເຫຼືອທ້າຍ ສຸດທິ ວັນທີ 30 ມິຖຸນາ 2026	**16,095,352,106**	**1,084,256,035**	**17,179,608,141**
ຕົ້ນທຶນ	24,198,280,762	1,084,256,035	25,282,536,797
ຫັກ: ຄ່າຕັດຖອນ	(8,102,928,656)	(-)	(8,102,928,656)
ມູນຄ່າສຸດທິ	**16,095,352,106**	**1,084,256,035**	**17,179,608,141**

ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026, ມີຕົ້ນທຶນຄ່າເຍື່ອນຊຳລະລໍຖ້າຕັດຕົ້ນທຶນການປຸກໄດ້ຕັດຖອນ ມູນຄ່າ 481,044,711 ກີບ (2025: 481,044,711 ກີບ) ໄດ້ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ.

ບໍລິສັດ ໄດ້ບັນທຶກເປັນຕົ້ນທຶນເພີ່ມເຕີມ ສຳລັບຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປຸກ ເປັນມູນຄ່າ 173,125,049 ກີບ ແລະ ໄດ້ໂອນເຂົ້າ ຈາກບັນຊີເຍື່ອນລໍຖ້າຕັດຕົ້ນທຶນການປຸກຕົ້ນປາມ-ເບ້ຍປາມເພື່ອຂາຍ ເປັນມູນຄ່າ 7,610,656 ກີບ. ຕົ້ນທຶນເຫຼົ່ານີ້ ແມ່ນກ່ຽວຂ້ອງກັບສວນປາມທີ່ຍັງບໍ່ທັນໃຫ້ຜົນຜະລິດ ເຊິ່ງຍັງບໍ່ທັນພ້ອມສຳລັບການເກັບກ່ຽວໃນການຄ້າ ແລະ ບົນພື້ນຖານນະໂຍບາຍການບັນຊີຂອງບໍລິສັດ, ການຕັດຖອນຄ່າຫຼ້ຍຫ້ຽນ ຈຶ່ງຍັງບໍ່ທັນໄດ້ເລີ່ມຕົ້ນຂຶ້ນສຳລັບຊັບສິນເຫຼົ່ານີ້. ດັ່ງນັ້ນ, ຄ່າຕັດຖອນ (ຄ່າຫຼ້ຍຫ້ຽນ) ສຳລັບງວດປັດຈຸບັນ ຈຶ່ງຍັງຄົງສອດຄ່ອງກັບງວດກ່ອນ ແລະ ກ່ຽວຂ້ອງສະເພາະກັບສວນປາມທີ່ໃຫ້ຜົນຜະລິດແລ້ວ ເຊິ່ງຢູ່ໃນຂັ້ນຕອນການເກັບກ່ຽວແລ້ວເທົ່ານັ້ນ.

12. ເຍື່ອນລໍຖ້າຕັດຕົ້ນທຶນການປຸກ (ຕໍ່)

12.1 ການປຸກຕົ້ນປາມ (ຕໍ່)

ເພື່ອຈຸດປະສົງໃນການນຳສະເໜີ, ຍອດຍົກມາ ນະວັນທີ 1 ມັງກອນ 2026 ແມ່ນໄດ້ຮັບການປັນສ່ວນ ລະຫວ່າງ ສວນປາມທີ່ໃຫ້ຜົນຜະລິດແລ້ວ ແລະ ສວນປາມທີ່ຍັງບໍ່ທັນໃຫ້ຜົນຜະລິດ. ໂດຍຍອດລວມຂອງຍອດຍົກມາເຫຼົ່ານີ້ ແມ່ນເທົ່າກັບຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປຸກ ສຳລັບສວນປາມ ທີ່ໄດ້ນຳສະເໜີໄວ້ກ່ອນໜ້ານີ້ ນະ ວັນທີ 31 ທັນວາ 2025. ການຈັດສັນດັ່ງກ່າວ ແມ່ນມີຜົນກະທົບຕໍ່ການນຳສະເໜີຂໍ້ມູນເທົ່ານັ້ນ ແລະ ບໍ່ມີຜົນກະທົບຕໍ່ມູນຄ່າຕາມບັນຊີລວມ.

12.2 ການປຸກຕົ້ນຢີນ້ຳ

	ການປຸກຕົ້ນຢີນ້ຳ ທີ່ຍັງບໍ່ທັນໃຫ້ຜົນຜະລິດ ກີບ	ລວມ ກີບ
ໄລຍະ 06 ເດືອນ ສິ້ນສຸດ ວັນທີ 30 ມິຖຸນາ 2026		
ຍອດຍົກມາ ສຸດທ ໃນວັນທີ 1 ມັງກອນ 2026	13,989,507,460	13,989,507,460
ເພີ່ມຂຶ້ນ	9,087,514,541	9,087,514,541
ໂອນໄປບໍລິສັດໃນເຄືອ	(3,436,665,182)	(3,436,665,182)
ຄ່າຕັດຮອນ	(-)	(-)
ຍອດເຫຼືອທ້າຍ ສຸດທ ວັນທີ 30 ມິຖຸນາ 2026	**19,640,356,819**	**19,640,356,819**
ຕົ້ນທຶນ	**19,640,356,819**	**19,640,356,819**
ຫັກ: ຄ່າຕັດຮອນ	(-)	(-)
ມູນຄ່າສຸດທ	**19,640,356,819**	**19,640,356,819**

ໃນລະຫວ່າງງວດ, ບໍລິສັດ ໄດ້ໂອນຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປຸກໃຫ້ແກ່ບໍລິສັດໃນເຄືອຂອງຕົນ. ການໂອນດັ່ງກ່າວ ແມ່ນເຮັດຂຶ້ນເພື່ອຈຸດປະສົງໃນການເພີ່ມທຶນທີ່ຊຳລະແລ້ວ ດ້ວຍຊັບສິນ ຂອງບໍລິສັດໃນເຄືອ. ມູນຄ່າລວມທີ່ໄດ້ໂອນແມ່ນ 3,436,665,182 ກີບ (ບົດອະທິບາຍ ທ 9).

ນະວັນທີ 30 ມິຖຸນາ 2026, ການປຸກຕົ້ນຢີນ້ຳ ແມ່ນຍັງບໍ່ທັນໃຫ້ຜົນຜະລິດການເກັບກ່ຽວໃນເຊີງການຄ້າ. ດັ່ງນັ້ນ, ຕົ້ນທຶນທັງໝົດຈຶ່ງໄດ້ຮັບການນຳສະເໜີເປັນສວນປຸກທີ່ຍັງບໍ່ທັນໃຫ້ຜົນຜະລິດ ແລະ ບໍ່ມີການຮັບຮູ້ຄ່າຕັດຮອນ ໃດໆໃນລະຫວ່າງງວດ.

ບໍ່ມີການຮັບຮູ້ການຕັດຈຳໜ່າຍ ຂອງຕົ້ນທຶນເຍື່ອນລໍຖ້າຕັດຕົ້ນທຶນການປຸກ ໃນໄລຍະເວລາ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 (2025: 262,258,453 ກີບ). ການຕັດຈຳໜ່າຍໃນງວດກ່ອນ ແມ່ນກ່ຽວຂ້ອງກັບສິນຊັບສວນປຸກ ທີ່ຄາດວ່າຈະບໍ່ສາມາດສ້າງຜົນປະໂຫຍດທາງເສດຖະກິດໃນອະນາຄົດໄດ້ອີກຕໍ່ໄປ ແລະ ໄດ້ຮັບການຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

13. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງສົ່ງການຄ້າ[i]	44,015,900,568	29,043,962,345
ໜີ້ຕ້ອງສົ່ງອື່ນໆ[ii]	1,602,714,533	1,153,168,858
ໜີ້ຕ້ອງສົ່ງອື່ນໆ-ບໍລິສັດໃນເຄືອ[iii]	207,369,602,245	215,676,073,342
	252,988,217,346	**245,873,204,545**

13. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ (ຕໍ່)

(i) ໜີ້ຕ້ອງສົ່ງການຄ້າ ສ່ວນໃຫຍ່ປະກອບມີຄ່າໝາກປາມຈາກລູກສອນ, ເຍື່ອນລໍຖ້າຕັດຕົ້ນທຶນການປູກ ແລະ ນ້ຳມັນປາມດິບ ແລະ ສິນຄ້າອື່ນໆ ແລະ ຄ່າບໍລິການອື່ນໆ ທີ່ໄດ້ມາຕາມການດຳເນີນທຸລະກິດ.

(ii) ໜີ້ຕ້ອງສົ່ງອື່ນໆ ສ່ວນໃຫຍ່ປະກອບມີ ຄ່າທີ່ປຶກສາຊ່ຽວຊານ, ເງິນເດືອນຄ້າງຈ່າຍ ແລະ ມູນຄ່າຄ້າງຊຳລະສຳລັບການຊື້ພາຫະນະ ອຸປະກອນ.

(iii) ຍອດເຫຼືອດັ່ງກ່າວ ແມ່ນມູນຄ່າສ່ວນທີ່ຍັງບໍ່ທັນໄດ້ຊຳລະ ຂອງທຶນຈົດທະບຽນທີ່ບໍລິສັດໄດ້ຈອງຊື້ ໃນບໍລິສັດໃນເຄືອ ທີ່ ບໍລິສັດເປັນເຈົ້າຂອງທັງໝົດ ຄື ບໍລິສັດ ລາວ ດີກຣີນ ຈຳກັດຜູ້ດຽວ. ໃນໄລຍະ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດ ໄດ້ຖອກທຶນເພີ່ມເຕີມ ທັງເປັນເງິນສົດ ແລະ ເປັນຊັບສິນ ລວມເປັນຈຳນວນ 8,306,471,097 ກີບ.

ດັ່ງນັ້ນ, ທຶນຈົດທະບຽນທີ່ຍັງຄ້າງຊຳລະໄດ້ຫຼຸດລົງຈາກ 215,676,073,342 ກີບ ນະວັນທີ 31 ທັນວາ 2025 ເປັນ 207,369,602,245 ກີບ ນະວັນທີ 30 ມິຖຸນາ 2026.

14. ໜີ້ສິນໝຸນວຽນອື່ນໆ

	ທິບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນເດືອນຄ້າງຈ່າຍ	53,232,409	56,042,744
ເງິນຮັບລ່ວງໜ້າຈາກລູກຄ້າ[(i)]	194,934,000	194,934,000
	248,166,409	**250,976,744**

(i) ບໍລິສັດໄດ້ຮັບເງິນລ່ວງໜ້າຈາກລູກຄ້າເພື່ອມັດຈຳໃນການຊື້ຜະລິດຕະພັນເສດເຫຼືອການປາມນຳບໍລິສັດ. ເຊິ່ງຍັງບໍ່ທັນໄດ້ສົ່ງ ມອບໃຫ້ລູກຄ້າ ນະວັນທີລາຍງານ.

15. ເງິນກູ້ຢືມຈາກຜູ້ຖືຮຸ້ນ

	ກີບ
ຍອດຍົກມາ ສຸດທ້ ໃນວັນທີ 1 ມັງກອນ 2026 - ກວດສອບ	**275,380,000**
ເພີ່ມຂຶ້ນ	1,028,495,000
ຂາດທຶນຈາກອັດຕາແລກປ່ຽນ	18,000,000
ຍອດເຫຼືອທ້າຍງວດ ສຸດທ ໃນວັນທີ 30 ມິຖຸນາ 2026 - ທິບທວນຄືນ	**1,303,875,000**

ເງິນກູ້ຢືມຈາກຜູ້ຖືຮຸ້ນ ແມ່ນຕາງໜ້າໃຫ້ແກ່ແຫຼ່ງທຶນທີ່ສະໜອງລ່ວງໜ້າໂດຍຜູ້ຖືຮຸ້ນ ເພື່ອສະໜັບສະໜຸນຄວາມຕ້ອງການດ້ານທຶນ ໝຸນວຽນຂອງບໍລິສັດ. ເງິນກູ້ຢືມດັ່ງກ່າວ ແມ່ນກຳນົດເປັນສະກຸນເງິນບາດ ໄທ ("THB"), ບໍ່ມີດອກເບ້ຍ, ບໍ່ມີຫຼັກຊັບຄ້ຳປະກັນ ແລະ ສາມາດທວງຖາມໃຫ້ຊຳລະຄືນໄດ້ທັນທີ ໂດຍສອດຄ່ອງກັບສັນຍາກູ້ຢືມເງິນທີ່ກ່ຽວຂ້ອງ.

ເນື່ອງຈາກຜູ້ຖືຮຸ້ນມີສິດຕາມສັນຍາໃນການທວງຖາມໃຫ້ຊຳລະຄືນໃນເວລາໃດກໍໄດ້, ເງິນກູ້ຢືມນີ້ ຈຶ່ງຖືກຈັດປະເພດເປັນໜີ້ສິນ ໝຸນວຽນ ນະວັນທີລາຍງານ.

16. ເງິນກູ້ຢືມໄລຍະສັ້ນ

	ກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ 2026 - ກວດສອບ	**2,000,000,000**
ເພີ່ມຂຶ້ນ	330,000,000
ຊຳລະຄືນ	(2,000,000,000)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2026 - ທີບທວນຄືນ	**330,000,000**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດໄດ້ຢືມເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານໄຊ່ງ່ອມ-ຮ່າໂນ້ຍ ລາວ ຈຳກັດ ມູນຄ່າ 330,000,000 ກີບ ແລະ ໄດ້ມີການຊຳລະເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 2,000,000,000 ກີບ.

ນະວັນທີ 30 ມິຖຸນາ 2026, ໃບຕາດິນບາງຕອນ ທີ່ເປັນກຳມະສິດຂອງບໍລິສັດ ເຊິ່ງມີມູນຄ່າຕາມບັນຊີ 2,712,654,900 ກີບ (ວັນທີ 31 ທັນວາ 2025: 2,712,654,900 ກີບ) ແມ່ນໄດ້ຖືກນຳໄປຄ້ຳປະກັນໃຫ້ແກ່ເງິນກູ້ຢືມໄລຍະສັ້ນຂອງບໍລິສັດ.

17. ໜີ້ຕ້ອງສົ່ງຈາກການເຊົ່າຊື້

	ທີບທວນຄືນ **30 ມິຖຸນາ 2026** **ກີບ**
ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	907,565,625
	907,565,625

ບໍລິສັດໄດ້ເຊັນສັນຍາເຊົ່າຊື້ສິນເຊື່ອລິດ 2 ຄັນ ເປັນເງິນບາດ ແລະ ເງິນກີບ.

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດບໍ່ມີການເຊົ່າຊື້ເພີ່ມ, ບໍ່ມີການຊຳລະເງິນຕົ້ນພາຍໃຕ້ສັນຍາດັ່ງກ່າວ.

18. ໜີ້ສິນບໍ່ໝຸນວຽນອື່ນໆ

ອີງຕາມຂໍ້ຕົກລົງສຳລັບການ ປູກຕົ້ນຢີປ້ຳ ສຳລັບໂຄງການ ຄາບອນອິກຊິເຈນ ລົງວັນທີ 16 ຕຸລາ 2023, ລະຫວ່າງ FOUR PRIDE PTE., LTD ຫຼື (FP) ແລະ ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ຫຼື (ບໍລິສັດ) ແມ່ນໄດ້ລະບຸລາຍລະອຽດໄລຍະເວລາ ແລະ ເງື່ອນໄຂດັ່ງນີ້:

- ໄລຍະເວລາຂອງໂຄງການ: 4 ປີນັບແຕ່ວັນທີ່ໄດ້ເລີ່ມຕົ້ນການປູກ ເຊິ່ງແມ່ນເດືອນພະຈິກ 2023.
- ສະຖານທີ່ປູກ: ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງສາລະວັນ, ສປປ ລາວ.
- ເນື້ອທີ່ປູກ 300 ເຮັກຕາ
- ຈຳນວນຕົ້ນຢີປ້ຳຕໍ່ເຮັກຕາ: 160 ຫາ 220 ຕົ້ນຕໍ່ເຮັກຕາເມື່ອທີການເຫັນດີລະຫວ່າງ ສອງຝ່າຍ.
- ຄ່າບໍລິການປູກຕົ້ນຢີປ້ຳ: 2,946.20 ໂດລາສະຫາລັດ ຕໍ່ເຮັກຕາ ສຳລັບໄລຍະເວລາ 4 ປີ, ມູນຄ່າທັງໝົດ 883,859.95 ໂດລາສະຫາລັດ ຫຼື ເທົ່າກັບ 18,223,424,449 ກີບ.

ຕະຫຼອດໄລຍະ 4 ປີ ພາຍໃຕ້ຂໍ້ຕົກລົງສະບັບນີ້, ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ ຕ້ອງສະໜອງ ແລະ ຮັບຜິດຊອບໃນການບໍລິການທີ່ຈຳເປັນທັງໝົດທີ່ກ່ຽວຂ້ອງກັບການປູກຕົ້ນຫຍີ່ນ້ຳ, ແຕ່ບໍ່ຈຳກັດສະເພາະ ການສ້າງພື້ນທີ່ປູກ, ລະບົບຊົນລະປະທານ, ການສະໜອງ ແລະ ກວດກາເບ້ຍໄມ້, ການປູກຕົ້ນໄມ້, ການຄຸ້ມຄອງສອນປູກ, ການຕັດແຕ່ງກິ່ງໄມ້, ການເກັບກ່ຽວ, ການບຳລຸງຮັກສາການປູກ, ການບໍລິຫານແຮງງານ ແລະ ກິດຈະກຳອື່ນໆທີ່ກ່ຽວຂ້ອງ. ກະກຽມອຸປະກອນ, ເຄື່ອງມື, ເຄື່ອງຈັດແທກ ຫຼື ອື່ນໆທີ່ຈຳເປັນສຳລັບການສະໜອງການບໍລິການແມ່ນຮັບຜິດຊອບຂອງ ບໍລິສັດ.

18. ໜີ້ສິນບໍ່ໝຸນວຽນອື່ນໆ (ຕໍ່)

ນະວັນທີ ວັນທີ 30 ມິຖຸນາ 2026, ບໍ່ມີການປ່ຽນແປງໃດໆທີ່ເປັນສາລະສຳຄັນຕໍ່ກັບຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາດັ່ງກ່າວ.

19. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

ລາຍຈ່າຍດັ່ງລຸ່ມນີ້ແມ່ນລາຍຈ່າຍຫຼັກໆທີ່ເກີດຂຶ້ນພາຍໃນງວດ ເຊິ່ງລວມຢູ່ໃນໃບລາຍງານຜົນໄດ້ຮັບ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ຕົ້ນທຶນໃນການຊື້ສິນຄ້າເພື່ອຂາຍ	18,077,643,317	16,789,210,819
ເງິນເດືອນ/ລາຍຈ່າຍກ່ຽວຂ້ອງກັບເງິນເດືອນ	1,563,126,117	1,718,778,799
ລາຍຈ່າຍບໍລິຫານອື່ນໆ	2,013,542,813	2,293,576,529
ຄ່າຫຼ້ຍຫ້ຽນຊັບສິນບັດຖິ່ທີ່ມີຕົວຕົນ ແລະ ຄ່າຕັດຖອນ (ບົດ ອະທິບາຍຂໍ້ 11 ແລະ 12)	1,403,635,019	1,413,971,102
ຄ່າທຳນຽມກວດສອບບັນຊີ	173,604,200	165,015,900

20. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລ ໃນອັດຕາ ແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງອີງຕາມລະບຽບ ຂອງຕະຫຼາດຫຼັກຊັບ ບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບຈາກປີທີ່ບໍລິສັດ ໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປລາວ. ອັດຕາດັ່ງກ່າວແມ່ນໃຊ້ ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2022 ເປັນຕົ້ນໄປ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ເຊິ່ງມັນ ບໍ່ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໄໝ ແລະ ລິງໂທດ.

ປັດໄຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າຈ່ຳ ໄດ້ຈັດ ກຽມຢ່າງພຽງພໍສຳລັບໜີ້ຕ້ອງສິ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ເຖິງວ່າບໍລິສັດ ຈະມີກຳໄລໃນໃບລາຍງານຜົນໄດ້ຮັບ ເປັນມູນຄ່າ 362,908,168 ກີບ, ແຕ່ຍອດດັ່ງກ່າວແມ່ນອີງໃສ່ໃນລະບຽບ ການທາງບັນຊີ. ແນວໃດກໍ່ຕາມ, ເມື່ອຄິດໄລ່ຕາມລະບຽບການທາງດ້ານອາກອນແລ້ວ, ທາງບໍລິສັດ ແມ່ນຍັງຄົງມີຜົນຂາດທຶນຈາກ ການດຳເນີນງານສຳລັບງວດ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດ ແມ່ນບໍ່ໄດ້ຮັບຮູ້ອາກອນກຳໄລໃນໃບລາຍງານຜົນໄດ້ຮັບ ເນື່ອງຈາກຂາດທຶນຈາກຜົນການດຳເນີນງານດັ່ງກ່າວ (2025: ບໍລິສັດ ແມ່ນບໍ່ໄດ້ຮັບຮູ້ອາກອນກຳໄລໃນໃບລາຍງານຜົນໄດ້ຮັບ ເນື່ອງຈາກຂາດທຶນຈາກຜົນການດຳເນີນງານ).

21. ກຳໄລ/ຂາດທຶນຕໍ່ຮຸ້ນ

ກຳໄລ/(ຂາດທຶນ) ພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງກຳໄລ/(ຂາດທຶນ) ຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາຖ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນໃນລະຫວ່າງງວດ.

	ທົບທວນຄືນ 30 ມິຖຸນາ 2026	ທົບທວນຄືນ 30 ມິຖຸນາ 2025
ກຳໄລ/(ຂາດທຶນ) ສຳລັບຜູ້ຖືຮຸ້ນສາມັນ (ກີບ)	**362,908,168**	**(4,344,711,924)**
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100,000,000	100,000,000
ກຳໄລ/(ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	3.63	(43.45)

22. ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງກັນ ປະກອບມີ ບຸກຄົນ ຫຼື ວິສາຫະກິດ ທີ່ມີອຳນາດຄວບຄຸມ, ພາຍໃຕ້ການຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນກັບກຸ່ມບໍລິສັດ ບໍ່ວ່າທາງກົງ ຫຼື ທາງອ້ອມ ລວມທັງຜູ້ບໍລິຫານຫຼັກ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນດັ່ງກ່າວ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ຍອດເຫຼືອຄ້າງຊຳລະ ທີ່ເກີດຂຶ້ນຈາກລາຍການເຄື່ອນໄຫວທີ່ກ່ຽວຂ້ອງກັນ ແມ່ນໄດ້ສະຫຼຸບໄວ້ດັ່ງລຸ່ມນີ້:

22.1 ຍອດຄ້າງຊຳລະຂອງທຸລະກຳທີ່ກ່ຽວຂ້ອງ:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ຕ້ອງສົ່ງໃຫ້		
ທຶນຈົດທະບຽນທີ່ຄ້າງຊຳລະ		
ບໍລິສັດ ລາວ ດີກຣິນ ຈຳກັດຜູ້ດຽວ[i]	207,369,602,245	215,676,073,342
ເງິນກູ້ຢືມຈາກຜູ້ຖືຮຸ້ນ[ii]	1,303,875,000	275,380,000
ໜີ້ສິນລວມ ຈາກພາກສ່ວນທີ່ກ່ຽວຂ້ອງ	**208,673,477,245**	**215,951,453,342**

(i) ຍອດເຫຼືອດັ່ງກ່າວ ແມ່ນຕາງໜ້າໃຫ້ແກ່ທຶນສ່ວນທີ່ຍັງບໍ່ທັນໄດ້ຊຳລະ ຂອງທຶນຈົດທະບຽນທີ່ບໍລິສັດໄດ້ຈອງຊື້ ໃນບໍລິສັດໃນເຄືອ ທີ່ບໍລິສັດເປັນເຈົ້າຂອງທັງໝົດຄື ບໍລິສັດ ລາວ ດີກຣິນ ຈຳກັດຜູ້ດຽວ. ໃນໄລຍະເວລາ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026, ບໍລິສັດ ໄດ້ປະກອບທຶນເພີ່ມເຕີມ ລວມເປັນມູນຄ່າ 8,306,471,097 ກີບ, ເຊິ່ງປະກອບມີ ການປະກອບທຶນເປັນຕົວເງິນມູນຄ່າ 4,869,805,915 ກີບ ແລະ ການປະກອບທຶນເປັນຊັບສິນ ມູນຄ່າ 3,436,665,182 ກີບ. ທັ້ງນີ້, ລາຍລະອຽດເພີ່ມເຕີມ ແມ່ນໄດ້ເປີດເຜີຍໄວ້ໃນ ບົດອະທິບາຍ ທີ 9.

(ii) ເງິນກູ້ຢືມຈາກຜູ້ຖືຮຸ້ນ ແມ່ນໄດ້ຮັບການສະໜອງໃຫ້ ເພື່ອສະໜັບສະໜຸນຄວາມຕ້ອງການດ້ານທຶນໝຸນວຽນຂອງບໍລິສັດ.

ເງິນກູ້ຢືມດັ່ງກ່າວ ແມ່ນກຳນົດເປັນສະກຸນເງິນບາດ ໄທ ("THB"), ບໍ່ມີດອກເບ້ຍ, ບໍ່ມີຫຼັກຊັບຄ້ຳປະກັນ ແລະ ສາມາດທວງຖາມໃຫ້ຊຳລະຄືນໄດ້ທັນທີ (ບົດອະທິບາຍ ທີ 15).

23. ເຫດການທີ່ເກີດຂຶ້ນພາຍຫຼັງ ມື້ລາຍງານ

ໃນວັນທີ 30 ກໍລະກົດ 2026, ບໍລິສັດ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ("MOU") ຮ່ວມກັບ ລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບການສຶກສາຄວາມເປັນໄປໄດ້ ຂອງໂຄງການພັດທະນາປ່າໄມ້ເສດຖະກິດ, ພືດພະລັງງານທົດແທນ ແລະ ພືດໃຫ້ນ້ຳມັນ ທີ່ສະເໜີຈັດຕັ້ງປະຕິບັດ ຢູ່ເມືອງແມດ, ແຂວງວຽງຈັນ, ສປປ ລາວ. ບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ແມ່ນກວມເອົາເນື້ອທີ່ ປະມານ 1,704 ເຮັກຕາ ແລະ ມີອາຍຸສັນຍາເບື້ອງຕົ້ນ 24 ເດືອນ.

ເນື່ອງດ້ວຍບົດບັນທຶກຄວາມເຂົ້າໃຈດັ່ງກ່າວ, ບໍລິສັດ ໄດ້ວາງເງິນຄ້ຳປະກັນໂຄງການ ເປັນມູນຄ່າ 70,000 ໂດລາສະຫະລັດ ໃນ ລະຫວ່າງເດືອນກໍລະກົດ 2026 ຕາມທີ່ກຳນົດໄວ້ພາຍໃຕ້ເງື່ອນໄຂຂອງສັນຍາ. ໂຄງການດັ່ງກ່າວ ຍັງຄົງຢູ່ໃນຂັ້ນຕອນການລໍຖ້າຜົນ ການສຶກສາຄວາມເປັນໄປໄດ້ໃຫ້ສຳເລັດ, ການອະນຸມັດດ້ານສິ່ງແວດລ້ອມ ແລະ ການເຈລະຈາສັນຍາສຳປະທານຮ່ວມກັບ ລັດຖະບານ.

ຄະນະກຳມະການບໍລິຫານ ໄດ້ປະເມີນເຫດການເຫຼົ່ານີ້ ວ່າເປັນເຫດການພາຍຫຼັງວັນທີໃນງົບປົດລາຍງານ ທີ່ບໍ່ຕ້ອງປັບປຸງມູນຄ່າ ແລະ ສະນັ້ນ, ຈຶ່ງບໍ່ມີການປັບປຸງໃດໆ ຕໍ່ຂໍ້ມູນທາງການເງິນສຳລັບງວດ ສິ້ນສຸດວັນທີ 30 ມິຖຸນາ 2026.